ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ມິຖຸນາ 2022
ປີທີ 11
ສະບັບທີ 851

## ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ






(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 13 ມິຖຸນາ 2022 ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ, ນະຄອນຫລວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງຄະນະປະທານຄະນະປະຈຳສະພາແຫ່ງຊາດ; ໃນທີ່ປະຊຸມ ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພິດໄຂກອງປະຊຸມຢ່າງເປັນທາງການ, ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ມີພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ; ພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ; ມີບັນດາທ່ານການນຳຂັ້ນສູງ, ອາດີດການນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມສະໄໝສາມັນ

ອ່ານຕໍ່ໜ້າ 3

## ເຊີດຊູຄວາມຮັບຜິດຊອບການເມືອງ ໃນການຄົ້ນຄວ້າປະກອບຄຳເຫັນ

**ຫົວຂໍ້ນີ້ແມ່ນຄະນະ ບກ. ຄັດຈາກບົດສູນທອນພິດຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນການພັກ, ປະທານສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX (ວັນທີ 13 ມິຖຸນາ 2022).**

**ຮຽນ:** - ພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ!

- ບັນດາທ່ານຜູ້ນຳຂັ້ນສູງ, ອາດີດຜູ້ນຳຂັ້ນສູງຂອງພັກ-ລັດ ທີ່ນັບຖື!
- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງທັງຫລາຍ.

ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 60 ກ່ຽວກັບກອງປະຊຸມສະໄໝສາມັນ ປະຈຳ 6 ເດືອນຕົ້ນປີ ຂອງສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງ

ອ່ານຕໍ່ໜ້າ 2

## ປະທານ ກຕທ ພົບປະເຮັດວຽກຮ່ວມກັບເອກອັກຄະລັດຖະທູດ ຣັດເຊຍ



(ສພຊ) ເພື່ອປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນກ່ຽວກັບການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ຄູ່ຮ່ວມຍຸດທະສາດ ລະຫວ່າງສອງປະເທດ ລາວ-ຣັດເຊຍ ກໍຄືສອງອົງການນິຕິບັນຍັດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຂຶ້ນເລື້ອຍໆ; ໃນວັນທີ 9 ມິຖຸນາ 2022 ທ່ານ ວະລາດີມີຣ໌ ກາລີນິນ (Vladimir Kalinin) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ຣັດເຊຍ ປະຈຳ ສປປລາວ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະເຮັດວຽກກັບທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ສະພາແຫ່ງຊາດລາວ ທີ່ຫ້ອງຮັບແຂກສະພາແຫ່ງຊາດ.

ການພົບປະເຮັດວຽກຄັ້ງນີ້, ທັງສອງຝ່າຍໄດ້ປຶກສາບາງວຽກງານທີ່ສຳຄັນ ເປັນຕົ້ນ ສະມາຊິກສະພາສູງແຫ່ງ ສະຫະພັນຣັດເຊຍ, ປະທານຄະນະມິດຕະພາບ ລັດຖະສະພາ ລະຫວ່າງ ລາວ-ຣັດເຊຍ, ສະເໜີມາຢ້ຽມຢາມລາວ ໃນ ລະຫວ່າງ ເດືອນ ມິຖຸນາ ຫາ ກໍລະກົດ 2022. ພ້ອມກັນນີ້, ສະພາແຫ່ງຊາດລາວ ກໍສະເໜີຈັດ

ອ່ານຕໍ່ໜ້າ 3

ບົດນຳ

## ພ້ອມກັນຕິດຕາມກອງປະຊຸມ ຢ່າງເປັນເຈົ້າການ

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນໃນຕອນເຊົ້າ ວັນທີ 13 ມິຖຸນາ 2022 ແລະ ຈະດຳເນີນໄປເຖິງວັນທີ 8 ກໍລະກົດ 2022.

ເຊິ່ງກອງປະຊຸມນີ້ແມ່ນປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 80 ກ່ຽວກັບກອງປະຊຸມສະໄໝສາມັນ ປະຈຳ 6 ເດືອນ.

1.ລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

ອ່ານຕໍ່ໜ້າ 3

## ປະທານ ກສຕສ ຕ້ອນຮັບ ຜູ້ຕາງໜ້າທະນາຄານພັດທະນາອາຊີ

(ສພຊ) ວັນທີ 8 ມິຖຸນາ 2022 ທີ່ສະພາແຫ່ງຊາດ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ໄດ້ຕ້ອນຮັບການເຂົ້າພົບປະຂອງທ່ານ ນາງ ໂຊໂນມິ ທານະກະ ຜູ້ຕາງໜ້າທະນາຄານພັດທະນາອາຊີ ປະຈຳ ສປປລາວ ພ້ອມດ້ວຍຄະນະ.

ໂອກາດນີ້, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນມາຍັງທ່ານ ນາງ ໂຊໂນມິ ທານາກະ ທີ່ໄດ້ສະລະເວລາອັນມີຄ່າມາພົບປະ ເຊິ່ງຈະເປັນໂອກາດດີທີ່ໄດ້ປຶກສາຫາລືກ່ຽວກັບຜົນການສຶກສາຄົ້ນຄວ້າ ໂດຍສະເພາະວຽກທີ່ຕິດພັນກັບຂົງເຂດເສດຖະກິດ, ການຄ້າ ເຊິ່ງພົວພັນກັບ ກສຕສ ແລະ ກະຊວງກ່ຽວຂ້ອງຂອງລັດຖະບານ ແລະ ໄດ້ສະເໜີກ່ຽວກັບພາລະບົດບາດຂອງ ກສຕສ ທ່ານຍັງໄດ້ໃຫ້ຮູ້ວ່າ: ກສຕສ ເຮັດໜ້າ

ອ່ານຕໍ່ໜ້າ 3

## ລະດົມຄວາມຄິດເຫັນ ໃສ່ຮ່າງປຶ້ມຄູ່ມື 3 ສະບັບ



ໜ້າ 3



ໜ້າ 4

ທະນາຄານພັດທະນາລາວ
LDB Bank

ໜ້າ 7



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

## ເຊີດຊູ...

ເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ກໍຄືບັນດາມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX, ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ແລະ ການຟື້ນຟູຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ຄືນຢູ່ສູ່ສະພາບປົກກະຕິ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມທີ່ມີຄວາມສຳຄັນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍຢ່າງສຸດອົກສຸດໃຈ (ຂໍຊົມເຊີຍ).

ຂໍສະແດງຄວາມຂໍ່ານັບຊົມເຊີຍ ບັນດາທ່ານຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານອາດີດການນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ (ຂໍຊົມເຊີຍ).

ຂໍສະແດງຄວາມຊົມເຊີຍ ຕໍ່ບັນສະມາຊິກສະມາແຫ່ງຊາດ ຊຸດທີ IX ໃນນາມທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ໄດ້ຕັ້ງໜ້າເຂົ້າຮ່ວມກອງປະຊຸມຄັ້ງນີ້ (ຂໍຊົມເຊີຍ).

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ

ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ເລີ່ມແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ມາຮອດປັດຈຸບັນ ກໍເປັນເວລາ 6 ເດືອນກວ່າ ເຊິ່ງຢູ່ໃນສະພາບການພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫລັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມແຫລມຫລາຍດ້ານ ທີ່ຄາດຄະເນໄດ້ຍາກ ບວກກັບສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປລາວ ຂອງພວກເຮົາ ເຖິງຢ່າງໃດກໍ່ຕາມໃນໄລຍະ 6 ເດືອນກວ່າທີ່ຜ່ານມາ, ພາຍໃຕ້ການນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ ໄດ້ປະສານສົມທົບກັບລັດຖະບານ ປຶກສາຫາລືວຽກງານສຳຄັນຕ່າງໆ ເພື່ອສ້າງຄວາມເປັນເອກະພາບໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການເໜັງຕີງຂອງອັດຕາແລກປ່ຽນ, ອັດຕາເງິນເຟີ້, ການເພີ່ມຂຶ້ນຂອງລາຄາສິນຄ້າ, ນ້ຳມັນເຊື້ອໄຟ ແລະ ອື່ນໆ; ລັດຖະບານໄດ້ເປັນເຈົ້າການຊີ້ນຳ-ບັນຊາບັນດາອົງການຈັດຕັ້ງລັດທຸກຂັ້ນ ກໍຄືປະຊາຊົນລາວບັນດາເຜົ່າ ຈັດຕັ້ງປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງຈິງຈັງ ເຊິ່ງມາຮອດປັດຈຸບັນການແຜ່ລະບາດຂອງພະຍາດດັ່ງກ່າວໄດ້ຫລຸດລົງ, ສາມາດຄວບຄຸມໄດ້ ແລະ ເຮັດໃຫ້ລັດຖະບານ ສາມາດປະກາດເປີດປະເທດ ໃນວັນທີ 9 ພຶດສະພາຜ່ານມາ ພ້ອມກັນນັ້ນ, ຍັງໄດ້ແກ້ໄຂໄພພິບັດທຳມະຊາດ ແລະ ວຽກງານອື່ນໆ ໄດ້ຮັບຜົນສຳເລັດຕາມຄາດໝາຍ: ບັນດາອົງການຈັດຕັ້ງຂອງພັກ-ລັດ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນໃນສັງຄົມ ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ກໍຄືການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົານັ້ນ ມີຄວາມຄືບໜ້າເປັນຢ່າງດີ ເຊິ່ງສາມາດບັນລຸຄາດໝາຍທາງດ້ານເສດຖະກິດມະຫາພາກຈຳນວນໜຶ່ງ, ເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ເສດຖະກິດສືບຕໍ່ມີການຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການຍົກສູງຂຶ້ນເປັນກ້າວໆ, ການພົວພັນຮ່ວມມືກັບຕ່າງປະເທດ ສືບຕໍ່ໄດ້ຮັບການເສີມຂະຫຍາຍຕາມທິດ "ການທູດປ້ອງກັນເທດ" ເຊິ່ງເຮັດໃຫ້ບົດບາດອິດທິພົນຂອງປະເທດເຮົາ ໄດ້ຮັບການຍົກສູງຢ່າງຕໍ່ເນື່ອງໃນເວທີພາກພື້ນ ແລະ ສາກົນ.

ບັນດາທ່ານຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ, ແຂກທີ່ນັບຖື ແລະ ຮັກແພງ

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1) ລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

3) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

5) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6) ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

7) ບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ,

8) ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ,

9) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19,

10) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ.

11) ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

12) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX:

13) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດ ໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ.

14) ພິຈາລະນາ ແລະ ຮັບຮອງເອົາກົດໝາຍໃໝ່ ແລະ ປັບປຸງ 9 ສະບັບ ດັ່ງນີ້:

ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວິຈິດສິນ, ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ, ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ,

ນອກນັ້ນ, ຍັງຈະໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຍົກຍ້າຍ, ແຕ່ງຕັ້ງຮອງປະທານກຳມາທິການຈຳນວນໜຶ່ງຂອງສະພາແຫ່ງຊາດ ແລະ ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ທີ່ວ່າງລົງ ພ້ອມກັນນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ບັນດາທ່ານທີ່ນັບຖື ແລະ ຮັກແພງ

ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດທີ່ມີຈຳນວນຫລາຍຄືດັ່ງກ່າວນີ້ໃຫ້ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນໃນການຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ພາວະວິໄສ ແລະ ເລິກເຊິ່ງ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ, ຮັບຮອງຄັ້ງນີ້ມີຄຸນນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳໃນໂອກາດອັນສະງ່າລາສີນີ້ ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

*❑ ກະຊວງໂຍທາທິການ ແລະ ຂົນສົ່ງ ເຫັນດີອະນຸຍາດ ແລະ ຍຸດຕິມາດຕະການຕ່າງໆຜ່ານມາໃນການເຂົ້າ-ອອກ ສປປລາວ ແລະ ການຂົນສົ່ງສິນຄ້າທັງພາຍໃນ ແລະ ຕ່າງປະເທດໃນທຸກຮູບແບບ ເພື່ອໃຫ້ສາມາດດຳເນີນໄປດ້ວຍຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ ໂດຍຕິດພັນກັບການຂົນສົ່ງໂດຍສານ ແລະ ສິນຄ້າທາງລົດໄຟ, ທາງອາກາດ, ທາງນ້ຳ ແລະ ການຂົນສົ່ງໂດຍສານ ແລະ ສິນຄ້າທາງບົກ.*

***ນສພ. ປະເທດລາວ 10/06/2022***

*❑ ບໍລິສັດທາງລົດໄຟ ລາວ-ຈີນ ໃຫ້ຮູ້ວ່າ: ລົດໄຟ ລາວ-ຈີນ ໄດ້ເປີດດຳເນີນການມາຄົບຮອບເຄິ່ງປີແລ້ວ, ມາຮອດວັນທີ 2 ມິຖຸນາ 2022 ນີ້, ການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າຂອງທາງລົດໄຟ ລາວ-ຈີນ ໄດ້ມີທ່າອ່ຽງເພີ່ມຂຶ້ນທັງດ້ານປະລິມານ ແລະ ຄຸນນະພາບ ເຊິ່ງສາມາດຂົນສົ່ງຜູ້ໂດຍສານໄດ້ທັງໝົດ 410.000 ຄົນ ແລະ ຂົນສົ່ງສິນຄ້າຂ້າມແດນໄດ້ປະມານ 640.000 ໂຕນ ເພື່ອຕອບສະໜອງຄວາມຕ້ອງການໃນການເດີນທາງ, ທາງລົດໄຟລາວ-ຈີນໄດ້ເປີດນຳໃຊ້ສະຖານີຜູ້ໂດຍສານ 4 ສະຖານີ ຕາມລຳດັບຄື: ສະຖານີນາເຕີຍ, ສະຖານີກາສີ, ສະຖານີເມືອງງາ ແລະ ສະຖານາໝໍ້, ມາຮອດປັດຈຸບັນສະຖານີຂົນສົ່ງຜູ້ໂດຍສານທັງໝົດລວມມີ 10 ສະຖານີ, ນອກຈາກນີ້, ຍັງໄດ້ຈັດຊື້ລົດໄຟ EMU ຂະບວນ "ລ້ານຊ້າງ" ເພີ່ມອີກ 1 ຂະບວນ ແລະ ລົດໄຟທຳມະດາ 1 ຂະບວນເປີດໃຊ້ບໍລິການໄປພ້ອມໆກັນ ໂດຍສະເລ່ຍການແລ່ນລົດໄຟແມ່ນ 6 ຖ້ຽວຕໍ່ມື້, ສູງສຸດແມ່ນ 8 ຖ້ຽວຕໍ່ມື້, ຂົນສົ່ງຜູ້ໂດຍສານສູງສຸດ 5.000 ຄົນຕໍ່ມື້. ພ້ອມດຽວກັນນັ້ນ, ດ້ານການບໍລິການໄດ້ຂະຫຍາຍເວລາຊື້ປີ້ລ່ວງໜ້າ ແລະ ໄດ້ມີການເປີດຈຸດຂາຍປີ້ຢູ່ບັນດາຕົວເມືອງໃຫຍ່ໃນລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເດີນທາງຫລາຍຂຶ້ນ.*

***ນສພ. ປະເທດລາວ 13/06/2022***

*❑ ນັບຕັ້ງແຕ່ວັນທີ 9 ພຶດສະພາ ເຖິງ ວັນທີ 6 ມິຖຸນາ 2022 ມີຜູ້ເດີນທາງເຂົ້າ ສປປລາວ 55.753 ຄົນ ແລະ ຜູ້ເດີນທາງອອກ 56.325 ຄົນ ສຳລັບນັກທ່ອງທ່ຽວພາຍໃນແຕ່ເດືອນມັງກອນ-ເມສາ 2022 ມີ 463.907 ຄົນ ສ້າງລາຍຮັບຈາກນັກທ່ອງທ່ຽວພາຍໃນ 52.398.296 ໂດລາ ສະເລ່ຍໄລຍະພັກເຊົາ 2,5 ວັນ/ຄົນ ລາຍຈ່າຍສະເລ່ຍ 45 ໂດລາ ຕໍ່ຄົນຕໍ່ວັນ; ປັດຈຸບັນ, ສາມາດຕີລາຄາໄດ້ວ່ານັກທ່ອງທ່ຽວຈາກພາກພື້ນ ແລະ ສາກົນ ໄດ້ຮັບຮູ້ກ່ຽວກັບການເປີດປະເທດຂອງ ສປປລາວ ຫລາຍຂຶ້ນ ແລະ ບັນດາບໍລິສັດຄູ່ສັນຍາຢູ່ຕ່າງປະເທດ ໄດ້ຈອງລາຍການທ່ອງທ່ຽວກັບບັນດາບໍລິສັດຄູ່ສັນຍາຢູ່ພາຍໃນປະເທດ ເຊິ່ງຄາດວ່າໄລຍະເດືອນມິຖຸນາ 2022 ເປັນຕົ້ນໄປ ນັກທ່ອງທ່ຽວຈາກພາກພື້ນ ແລະ ສາກົນ ຈະຄ່ອຍເດີນທາງເຂົ້າມາທ່ອງທ່ຽວຢູ່ ສປປລາວ ຫລາຍຂຶ້ນ.*

***ນສພ. ວຽງຈັນໃໝ່ 13/06/2022***



## ປະທານ...

ທີ່ເປັນເສນາທິການ ໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິ ຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ໃນຂົງເຂດວຽກງານເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ເຊິ່ງ ກວມມີ 6 ກະຊວງ ຄື: ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງເຂດເສດຖະກິດພິເສດ.

ພ້ອມນັ້ນ, ທ່ານ ນາງ ໂຊ ໂນມິ ທານະກະ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບໃນຄັ້ງນີ້ ແລະ ໄດ້ລາຍງານຜົນໄດ້ຮັບຂອງຜົນການສຳຫລວດການສ້າງສິ່ງອຳນວຍຄວາມສະດວກ ທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ ແລະ ປຶກສາຫາລືແລກປ່ຽນຄວາມຄິດເຫັນຕໍ່ບົດລາຍງານສະບັບດັ່ງກ່າວ ເຊິ່ງແຮງຈູງໃຈແມ່ນເພື່ອສ້າງຄວາມເຂົ້າໃຈຕໍ່ການປ່ຽນແປງຮູບແບບການດຳເນີນທຸລະກິດ ໃນຊ່ວງປີ 2018-2020 ໂດຍສະເພາະແມ່ນການປ່ຽນແປງໃນຂະບວນການຂັ້ນຕອນການເລີ່ມຕົ້ນທຸລະກິດໃນ ສປປລາວ, ການນຳສະເໜີຂອງທະນາຄານພັດທະນາອາຊີ ແມ່ນການແນະນຳໃຫ້ວິສະຫະກິດ ແລະ ລະບຽບການຕ່າງໆໃນການດຳເນີນທຸລະກິດ ເຊິ່ງຜົນການສຳຫລວດເຫັນວ່າໂດຍລວມພາກທຸລະກິດຂອງລາວໄດ້ຮັບການປັບປຸງຫລາຍຂຶ້ນ ແລະ ໄດ້ຮັບການອຳນວຍຄວາມສະດວກຫລາຍຂຶ້ນ ຄຽງຄູ່ກັບການປັບປຸງທີ່ດີຂຶ້ນນັ້ນ ຍັງເຫັນໄດ້ບາງດ້ານທີ່ຄວນເອົາໃຈໃສ່ຄືຄວາມໂປ່ງໃສ ແລະ ຄວາມອາດສາມາດໃນການເຂົ້າເຖິງຂໍ້ມູນຂອງຫົວໜ່ວຍທຸລະກິດ ແລະ ຍັງສາມາດສັງເກດໄດ້ອີກວ່າພາກດຳເນີນທຸລະກິດ ໃນ ສປປລາວ ແມ່ນມີການຍົກບົດບາດຍິງ-ຊາຍຫລາຍຂຶ້ນ ເຊິ່ງບົດລາຍງານສະບັບດັ່ງກ່າວ ແມ່ນທາງທະນາຄານພັດທະນາອາຊີ ໄດ້ປະສານສົມທົບກັບສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ແລະ ໄດ້ຮັບການເຜີຍແຜ່ແລ້ວສອງຄັ້ງ ເມື່ອຄັ້ງວັນທີ 31 ມີນາ 2022 ແລະ 23 ພຶດສະພາ 2022.

ຈາກນັ້ນ, ທັງສອງທ່ານຍັງໄດ້ປຶກສາຫາລືບັນຫາຕ່າງໆ ໂດຍສະເພາະການສຶກສາວິໄຈຂໍ້ມູນໃນປະເທດ ບໍ່ວ່າຈາກທາງສະຖາບັນຄົ້ນຄວ້າຕ່າງໆ ຈາກມະຫາໄລແຫ່ງຊາດ ແລະ ອື່ນໆ ແມ່ນມີຫລາຍພໍສົມຄວນ ແຕ່ເຫັນວ່າຂໍ້ມູນຈຳນວນຫລາຍທີ່ໄດ້ມາຍັງຂາດແຄນບຸກຄະລາກອນຊ່ຽວຊານໃນການວິເຄາະວິໄຈຂໍ້ມູນທີ່ໄດ້ມາ ເພື່ອກຳນົດ ແລະ ສ້າງນະໂຍບາຍ ຕິດຕາມການຈັດຕັ້ງປະຕິບັດຂອງລັດຖະບານ ກໍຄືກະຊວງທີ່ກ່ຽວຂ້ອງ ເຊິ່ງທາງທະນາຄານພັດທະນາອາຊີ ອາດຄົ້ນຄວ້າປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອຄວາມຮ່ວມມືໃນອານາຄົດ ທັງເພື່ອສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ກ່າວມານັ້ນ.

## ກອງປະຊຸມ...

ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1. ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

3. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

4. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

5. ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6. ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

7. ບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ;

8. ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ;

9. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19;

10. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ.

11. ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

12. ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

13. ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ.

14. ພິຈາລະນາ ແລະ ຮັບຮອງເອົາກົດໝາຍໃໝ່ ແລະ ປັບປຸງ 9 ສະບັບ ດັ່ງນີ້: ຮ່າງກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວິຈິດສິນ; ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ; ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

ຕາມວາລະດຳເນີນກອງປະຊຸມໃນພາກເຊົ້າຂອງພິທີເປີດ ພາຍຫລັງການກ່າວສູນທອນພົດຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ແລ້ວ, ພະນະທ່ານ ພັນຄຳ ວິພາວັນ ໄດ້ລາຍງານໂດຍສັງເຂບ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022. ຈາກນັ້ນ, ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022. ຫລັງຈາກນັ້ນ, ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022, ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022. ຈາກນັ້ນ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022.

ສຳລັບຕອນບ່າຍຂອງວັນດຽວກັນ, ໄດ້ຮັບຟັງການລາຍງານກ່ຽວກັບການເລືອກຕັ້ງແທນ, ການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ; ຈາກນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022.

ໄລຍະດຳເນີນກອງປະຊຸມສະພາແຫ່ງຊາດ ຍັງໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເປີດຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກທົ່ວສັງຄົມໃນໂມງລັດຖະການ ຜ່ານໂທລະສັບໝາຍເລກ 156 ໂດຍບໍ່ໄດ້ເສຍຄ່າ ແລະ ສົ່ງອີເມວ Nalao.156@gmail.com.

(ນາງ ສຸພາວັນ ທອນສະນິດ)

## ປະທານ ກຕທ...

ການພົບປະທາງໄກ ລະຫວ່າງ ສອງປະທານຄະນະມິດຕະພາບລັດຖະສະພາ ລະຫວ່າງ ລາວ-ຣັດເຊຍ ແລະ ຣັດເຊຍ-ລາວ. ກຳມາທິການການຕ່າງປະເທດ, ສະພາແຫ່ງຊາດລາວ ໄດ້ຮັບຈົດໝາຍຈາກທ່ານປະທານກຳມາທິການການຕ່າງປະເທດ, ສະພາດູມາແຫ່ງ ສະຫະພັນຣັດເຊຍ ທີ່ໄດ້ສະແດງຄວາມຂອບໃຈນຳສະພາແຫ່ງຊາດລາວ ໃນການປະກອບສ່ວນອັນສຳຄັນເຂົ້າໃນການເພີ່ມທະວີການພົວພັນຮ່ວມມືສອງຝ່າຍລາວ-ຣັດເຊຍໃນໄລຍະຜ່ານມາ ແລະ ສະເໜີໃຫ້ສອງກຳມາທິການການຕ່າງປະເທດ ຂອງສະພາແຫ່ງຊາດລາວ ແລະ ສະພາດູມາຣັດເຊຍ ສືບຕໍ່ເພີ່ມທະວີການພົວພັນຮ່ວມມືໃນຕໍ່ໜ້າ ຈຶ່ງຂໍສະເໜີພົບປະທາງໄກ ລະຫວ່າງສອງປະທານກຳມາທິການການຕ່າງປະເທດ. ເຊິ່ງໃນການພົບປະຄັ້ງນີ້, ທ່ານປະທານກຳມາທິການການຕ່າງປະເທດ ໄດ້ແຈ້ງໃຫ້ທ່ານທູດຊາບວ່າ ສະພາແຫ່ງຊາດລາວ ໄດ້ມີການປັບປຸງບົດບັນ ທຶກວ່າດ້ວຍການຮ່ວມມື (MOU) ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາສູງແຫ່ງ ສະຫະພັນຣັດເຊຍ ທີ່ໄດ້ລົງນາມຮ່ວມກັນໃນ ປີ 2013 ເຊິ່ງເຫັນວ່າ ອາຍຸຂອງບົດບັນທຶກດັ່ງກ່າວໄດ້ໝົດແລ້ວ (ກຳນົດ 5 ປີ) ແລະ ເນື້ອໃນກໍບໍ່ທັນສອດຄ່ອງກັບສະພາບການໃນປັດຈຸບັນ; ສະພາແຫ່ງຊາດລາວ ໄດ້ຮັບໜັງສືສະເໜີຈາກສະຖານທູດລາວປະຈຳ ມົດສະກູ ໂດຍຜ່ານກະຊວງການຕ່າງປະເທດ ແລະ ສະໂນດນຳສົ່ງຈາກສະຖານທູດຣັດເຊຍ ປະຈຳລາວ ກ່ຽວກັບການຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ແລະ ນິຕິກຳອື່ນໆ ທີ່ກ່ຽວພັນກັບການຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງ ສອງປະເທດລາວ-ຣັດເຊຍ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.

ພ້ອມນັ້ນ, ທ່ານເອກອັກຄະລັດຖະທູດ ກໍເຫັນດີຈະຊ່ວຍປະສານໃຫ້ທ່ານປະທານຄະນະມິດຕະພາບລັດຖະສະພາ ຣັດເຊຍ-ລາວ ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ; ພ້ອມຈະຊ່ວຍປະສານຫາສະພາດູມາ ເພື່ອຈັດກອງປະຊຸມພົບປະທາງໄກ ຂອງກຳມາທິການການຕ່າງປະເທດ. ການພົບປະຄັ້ງນີ້ ໄດ້ດຳເນີນໃນບັນຍາກາດມິດຕະພາບທີ່ດີ.

(ກິງທະນູຄຳ ພິພັດເສລີ)

## ລະດົມ...

(ສພຊ) ເພື່ອລະດົມແນວຄວາມຄິດເຫັນ ແລະ ສັງລວມດ້ານເນື້ອໃນເຂົ້າໃສ່ຮ່າງປື້ມຄູ່ມື 3 ສະບັບ ຂອງສະພາແຫ່ງຊາດ ໃຫ້ມີຄວາມສົມບູນ ແລະ ມີຄວາມສຳເລັດ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີທິດຊີ້ນຳ ແລະ ສ້າງຄວາມເປັນເອກະພາບຮ່ວມກັນທາງດ້ານເນື້ອໃນຂອງການສ້າງຮ່າງປື້ມຄູ່ມື 3 ສະບັບດັ່ງກ່າວ ໃຫ້ມີປະສິດທິພາບ; ດັ່ງນັ້ນ, ໃນລະຫວ່າງວັນທີ 3-4 ມິຖຸນາ 2022 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາລະດົມຄວາມຄິດເຫັນໃສ່ຮ່າງປື້ມຄູ່ມື 3 ສະບັບ ຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ມີບັນດາທ່ານຮອງປະທານກຳມາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ, ອາດີດການນຳຂອງສະພາແຫ່ງຊາດ ຊຸດທີ VIII, ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງເມືອງ, ບັນດາທ່ານຊ່ຽວຊານສ້າງຮ່າງປື້ມຄູ່ມື ແລະ ບັນດາທ່ານຄະນະກົມ, ຕາງໜ້າອົງການເຮວວິຕັດ ແລະ ກອງເລຂາຊ່ວຍວຽກ ພ້ອມດ້ວຍແຂກຖືກເຊີນ.

ກອງປະຊຸມ ໄດ້ຮັບຟັງການສະເໜີຮ່າງປື້ມຄູ່ມືລົງພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ຮ່າງຄູ່ມືການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ຮັບຟັງການສະເໜີຮ່າງປື້ມຄູ່ມືການພິຈາລະນາ ແລະ ແກ້ໄຂສາຍດ່ວນ ຈາກບັນດານັກວິທະຍາກອນ; ຈາກນັ້ນ, ຜູ້ແທນກອງປະຊຸມ, ຊ່ຽວຊານຈາກລັດຖະສະພາເຢຍລະມັນ (ຜ່ານທາງວິດີໂອທາງໄກ) ແລະ ບັນດາອາດີດການນຳສະພາແຫ່ງຊາດ ກໍໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງປື້ມຄູ່ມືດັ່ງກ່າວເພື່ອໃຫ້ມີເນື້ອໃນຄົບຖ້ວນ, ແທດເໝາະ ກັບການປະຕິບັດຕົວຈິງ.

ເຊິ່ງກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນໃຫ້ທຶນຂອງອົງການເຮວວິຕັດ.

(ສອນສັກ ວັນວິໄຊ)

## ພ້ອມກັນ...

3. ບົດລາຍງາຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022.

ນອກນັ້ນ, ຍັງຈະໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຍົກຍ້າຍ, ແຕ່ງຕັ້ງຮອງປະທານກຳມາທິການຈຳນວນໜຶ່ງຂອງສະພາແຫ່ງຊາດ ແລະ ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ທີ່ວ່າງລົງ; ພ້ອມກັນນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວ ທັງຊາດ ຈົ່ງພ້ອມກັນຕິດຕາມກອງປະຊຸມຢ່າງເປັນເຈົ້າການ ທັງສາມາດມີຄຳເຫັນສະເໜີມາຍັງກອງປະຊຸມ ໂດຍຜ່ານໂທລະສັບສາຍດ່ວນນ 156.

ອີເມວ: Nalao.156@gmail.com.

# ຮອງປະທານ ຄສຜງ ສປນວ ຊຸກຍູ້ພະແນກການເງິນ



(ສພຊ) ວັນທີ 3 ມິຖຸນາ 2022 ທ່ານ ນາງ ພິດສະໄໝ ຕົ້ນສະຫວັນ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ) ສະພາປະຊາຊົນນະຄອນຫລວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຢູ່ພະແນກການເງິນນະຄອນຫລວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ນາງ ພວງສີ ເຜົ້າລາວັນ ຮອງຫົວໜ້າພະແນກການເງິນ ນວ.

ທ່ານ ນາງ ພວງສີ ເຜົ້າລາວັນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ ໃຫ້ຄະນະລົງເຮັດວຽກຮັບຊາບວ່າ: ໄລຍະ 5 ເດືອນຕົ້ນປີ 2022 ພະແນກການເງິນ ນວ ສາມາດຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໂດຍສາມາດເກັບລາຍຮັບໄດ້ 31,02% ທຽບໃສ່ແຜນການປີ 2022, ໃນນັ້ນ ລາຍຮັບພູດສູນກາງ ປະຕິບັດໄດ້ 28,33% ແລະ ລາຍຮັບທ້ອງຖິ່ນ ປະຕິບັດໄດ້ 38,47% ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຫັນວ່າເພີ່ມຂຶ້ນ 24,36%; ພ້ອມດຽວກັນນີ້, ກໍສາມາດຈັດຕັ້ງປະຕິບັດດ້ານລາຍຈ່າຍ 33,86% ຂອງແຜນການປີ 2022 ໃນນັ້ນ, ລາຍຈ່າຍບໍລິຫານ (ປົກກະຕິ) ເທົ່າກັບ 33,85% ແລະ ລາຍຈ່າຍໃນການລົງທຶນຂອງລັດ ເທົ່າກັບ 18,56%; ໂດຍລວມແລ້ວ, ການປະຕິບັດລາຍຈ່າຍສ່ວນໃຫຍ່ ແມ່ນໄດ້ສຸມໃສ່ການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ເປັນບູລິມະສິດອັນດັບໜຶ່ງ, ສ່ວນລາຍຈ່າຍບໍລິຫານ ແລະ ດັດສົມສິ່ງເສີມແມ່ນປະຕິບັດມາດຕະການຄຸ້ມຄອງລາຍຈ່າຍຢ່າງຮັດກຸມ ແລະ ປະຢັດມັດທະຍັດ ແນໃສ່ເພື່ອຮັບປະກັນສະພາບຄ່ອງໃນລະບົບງົບປະມານ. ນອກຈາກນີ້, ຍັງສາມາດປະຕິບັດການດຸ່ນດ່ຽງພັນທະຕາມແຜນສູນກາງໄດ້ 26,25% ຂອງແຜນການປີ 2022.

ຜ່ານການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ, ພະແນກການເງິນ ນວ ກໍໄດ້ເອົາໃຈໃສ່ໃນການປະຕິບັດນິຕິກຳລຸ່ມກົດໝາຍ ທີ່ກ່ຽວຂ້ອງກັບການຈັດເກັບລາຍຮັບຢ່າງເຂັ້ມງວດ ເພື່ອຮັບປະກັນໃຫ້ແກ່ການສ້າງ ແລະ ຂະຫຍາຍຖານລາຍຮັບ, ຄຸ້ມຄອງການຈັດເກັບລາຍຮັບ, ຂຸດຄົ້ນລາຍຮັບທີ່ບົ່ມຊ້ອນ ພ້ອມທັງສຳຫລວດຖານລາຍຮັບໃໝ່ ເພື່ອເພີ່ມລາຍຮັບເຂົ້າງົບປະມານ; ໄດ້ຫັນເປັນທັນສະໄໝໃນການຈັດເກັບລາຍຮັບຈາກການຄຸ້ມຄອງການຈົດທະບຽນຊັບສິນຂອງລັດ ໂດຍສາມາດເຊື່ອມຕໍ່ຖານຂໍ້ມູນກັບກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ນະຄອນຫລວງ ເຊິ່ງການອອກໃບຄິດໄລ່ມອບພັນທະຊັບສິນ ຈະມີລະບົບການສະໜອງຂໍ້ມູນປະເພດລົດ, ເລກຈັກ, ເລກຖັງ, ມູນຄ່າລາຄາ ລວມໄປເຖິງການຄິດໄລ່ຄ່າທຳນຽມຕ່າງໆຕາມລະບຽບການ ໂດຍອັດຕະໂນມັດ; ສົ່ງເສີມການນຳໃຊ້ເຄື່ອງມືທັນສະໄໝ ເພື່ອເກັບລາຍຮັບໃຫ້ຂະຫຍາຍຕົວຢ່າງກວ້າງຂວາງ, ສ້າງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດເຂົ້າໃນລະບົບຄຸ້ມຄອງຂໍ້ມູນໃນການເກັບລາຍຮັບ (TaxRIS) ເຊິ່ງສາມາດປະຕິບັດໄດ້ 3,539 ຫົວໜ່ວຍ ເທົ່າກັບ 54,44% ຂອງແຜນການປີ 2022 ເມື່ອທຽບໃສ່ໄລຍະດຽວກັນ ໃນປີ 2021 ສາມາດປະຕິບັດໄດ້ເກີນ 1.215 ຫົວໜ່ວຍ; ແກ້ໄຂການຮົ່ວໄຫລຂອງງົບປະມານໃນການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 18/ນຍ, ລົງວັນທີ 16 ກັນຍາ 2021 ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານ; ສືບຕໍ່ເລັ່ງທວງ ແລະ ເກັບຄືນບັນດາລາຍຮັບທີ່ເປັນໜີ້ຄ້າງມອບຈາກບັນດາວິສາຫະກິດ, ໂຄງການສຳປະທານ, ຄ່າທຳນຽມ ແລະ ຄ່າສຳປະທານທີ່ດິນ ທີ່ຄ້າງມອບມາຫລາຍປີ; ສຸມໃສ່ຊອກຄົ້ນແຫລ່ງລາຍຮັບທີ່ເປັນທ່າແຮງບົ່ມຊ້ອນ; ຕິດຕາມກວດກາການລັກລອບຂຸດຄົ້ນ ແລະ ເຄື່ອນຍ້າຍຊັບພະຍາກອນທຳມະຊາດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເພື່ອປະຕິບັດມາດຕະການຮິບ, ປັບໃໝ ແລະ ມອບເຂົ້າງົບປະມານໃຫ້ຄົບຖ້ວນ.

ໂອກາດດຽວກັນນີ້, ຄະນະລົງເຮັດວຽກ ກໍໄດ້ມີບາງຄຳຖາມເຈາະຈີ້ມຕໍ່ກັບພະແນກການເງິນ ນວ ເຊິ່ງຄະນະພະແນກ ກໍໄດ້ຊີ້ແຈງ ແລະ ແລກປ່ຽນບາງບັນຫາຕໍ່ຄະນະລົງເຮັດວຽກ ເພື່ອຊອກຫາວິທີແກ້ໄຂຮ່ວມກັນໃນຕໍ່ໜ້າ.

(ນາງ ພອນທິບ ອິນທິລາດ)




# ສພຂ ຫລວງນ້ຳທາ ສະຫລຸບວຽກງານ 6 ເດືອນຕົ້ນປີ 2022 ແລະ ວາງທິດທາງແຜນການໃນຕໍ່ໜ້າ



(ສພຊ) ຕອນບ່າຍຂອງວັນທີ 27 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເປີດກອງປະຊຸມປະຈຳເດືອນພຶດສະພາ 2022 ທີ່ຫ້ອງປະຊຸມ ສພຂ ຫລວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະຮອງປະທານ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມທັງໝົດ 38 ຄົນ ຍິງ 16 ຄົນ.

ກອງປະຊຸມໄດ້ຮັບຟັງຮ່າງບົດລາຍງານການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງຄະນະປະຈຳສະພາປະຊາຊົນແຂວງ ເຊິ່ງໃນໄລຍະ 6 ເດືອນຕົ້ນປີຜ່ານມາ ຄະນະປະຈຳສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາ ສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກພັກ, ບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຜິດຊອບສູງໃນການປະຕິບັດຄຳສັ່ງ, ລະບຽບການ ແລະ ມາດຕະການຕ່າງໆຂອງພັກ, ລັດ ແລະ ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດສິດ ແລະ ໜ້າທີ່ ເປັນຕົ້ນແມ່ນດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ, ດ້ານການຕິດຕາມກວດກາ ແລະ ໄດ້ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີ II ໄດ້ທັງໝົດ 60 ຈຸດ, ມີຜູ້ເຂົ້າຮ່ວມທັງໝົດ 4.204 ຄົນ ຍິງ 2.020 ຄົນ ພ້ອມທັງນຳເອົາເຄື່ອງນຸ່ງຫົ່ມ, ອຸປະກອນການຮຽນ-ການສອນ ແລະ ເຄື່ອງອຸປະໂພກອື່ນໆ ມອບໃຫ້ເຂດຫ່າງໄກສອກຫລີກ ລວມມູນຄ່າທັງໝົດ 135.850.000 ກີບ, ສຳລັບທິດທາງແຜນການເຄື່ອນໄຫວ 6 ເດືອນທ້າຍປີ 2022 ແມ່ນຈະສືບຕໍ່ຊີ້ນຳ-ນຳພາ ແລະ ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນພາຍໃນ ສພຂ ມີແນວຄິດອຸ່ນອ່ຽນໜຸ່ນທ່ຽງ, ມີຄຸນສົມບັດສິນທຳປະຕິວັດ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ເຄົາລົບລັດຖະທຳມະນູນ, ກົດໝາຍຂອງລັດ, ເອົາໃຈໃສ່ປະຕິບັດໜ້າທີ່ການເມືອງຂອງຕົນດ້ວຍຄວາມຮັບຜິດຊອບສູງ.

ຫລັງຈາກນັ້ນ, ຍັງໄດ້ຮັບຟັງແຈ້ງການເລກທີ 376/ພຕທ, ວັນທີ 26 ພຶດສະພາ 2022 ວ່າດ້ວຍເລື່ອງການກວດກາໜັງສືຜ່ານແດນທາງລັດຖະການ ແລະ ໜັງສືຜ່ານແດນທົ່ວໄປຂອງຕົນເອງ. ພ້ອມດຽວກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ແລກປ່ຽນປະກອບຄຳຄິດເຫັນຕໍ່ກັບຮ່າງບົດສະຫລຸບລາຍງານການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດນຳໄປຈັດຕັ້ງປະຕິບັດຕໍ່ໜ້າໃຫ້ມີຄຸນນະພາບ.

ພ້ອມນັ້ນ, ຍັງໄດ້ແລກປ່ຽນປະກອບຄຳຄິດເຫັນ, ຄຳສະເໜີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານພາຍໃນ ສພຂ ຢ່າງເປັນຂະບວນຟົດຟື້ນ ເພື່ອເຮັດໃຫ້ວຽກງານການເຄື່ອນໄຫວພາຍໃນ ສພຂ ມີຄວາມສະດວກ, ຖືກຕ້ອງ, ວ່ອງໄວ ແລະ ມີຄຸນນະພາບຂຶ້ນກວ່າເກົ່າ.

(ນາງ ວັນນີ ແຝງບົວວັນ)

# ສພຂ ອັດຕະປື ຈັດກອງປະຊຸມທາບທາມຮ່າງກົດໝາຍ 5 ສະບັບ



(ສພຊ) ເພື່ອຮັບປະກັນດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ) ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ຕົວຈິງໃນປັດຈຸບັນ ທັງເພື່ອເປັນຂໍ້ມູນລາຍງານຕໍ່ສະພາແຫ່ງຊາດ ກ່ອນທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX. ກອງປະຊຸມທາບທາມໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 18 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ເພື່ອທາບທາມປະກອບຄຳຄິດຄຳເຫັນໃສ່ບາງມາດຕາຂອງຮ່າງກົດໝາຍ 5 ສະບັບດັ່ງກ່າວ ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື, ປະທານ ສພຂ; ມີບັນດາທ່ານຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ ແລະ ພະນັກງານ-ວິຊາການເຂົ້າຮ່ວມ.

(ວິບັດ ສີສຸລາດ)



# ຄະນະເຮັດວຽກຂອງ 2 ອົງການ ເຂົ້າພົບປະທານ-ຮອງປະທານ ສພຂ ຜົ້ງສາລີ


ເຂົ້າພົບປະທານ ສພຂ

(ສພຊ) ຕອນເຊົ້າວັນທີ 27 ພຶດສະພາ 2022 ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ, ທ່ານ ພອນແກ້ວ ສີຫອມວົງ ຫົວໜ້າພະແນກກົມກວດກາລັດ ອົງການກວດກາແຫ່ງລັດ ພ້ອມດ້ວຍທີມງານ ໄດ້ເຂົ້າພົບທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ.

ການພົບປະຄັ້ງນີ້, ກໍເພື່ອເປັນການແຈ້ງຈຸດປະສົງຂອງການມາເຄື່ອນໄຫວຂອງຄະນະທີມງານ ເຊິ່ງແມ່ນການເຄື່ອນໄຫວຕິດຕາມກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ ຈຳນວນ 2 ໂຄງການ, ກວດກາໂຄງການຕາມຜົນການກວດສອບ ປີ 2018 ແລະ 2019 (ໂຄງການບໍ່ໄດ້ເຮັດສັນຍາເຊົ່າ-ສຳປະທານທີ່ດິນລັດ 22 ໂຄງການ ແລະ ໂຄງການນອກແຜນ 1 ໂຄງການ) ແລະ ຊຸກຍູ້ວຽກງານກວດກາລັດ ຢູ່ແຂວງຜົ້ງສາລີ.

ໂອກາດດຽວກັນນີ້, ທ່ານ ທອງສີ ເສົາສຸລິພົມ ໄດ້ມີຄຳເຫັນຕໍ່ຄະນະທີມງານກວດກາແຫ່ງລັດ ເຊິ່ງທ່ານໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຄະນະທີມງານທີ່ໄດ້ເອົາໃຈໃສ່ໃນການຕິດຕາມກວດກາໂຄງການລົງທຶນຂອງລັດຕາມພາລະບົດບາດຂອງຕົນ ສະແດງອອກການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆ ໄດ້ຮັບການແກ້ໄຂຕາມລະບຽບກົດໝາຍ. ພ້ອມກັນນັ້ນ, ທ່ານຍັງມີຄຳເຫັນຊີ້ນຳຕໍ່ຄະນະທີມງານອົງການກາແຫ່ງລັດ ທີ່ເຄື່ອນໄຫວຢູ່ແຂວງຜົ້ງສາລີໃນຄັ້ງນີ້ ເປັນຕົ້ນແມ່ນການກວດກາບັນດາໂຄງການເຊົ່າ-ສຳປະທານດິນລັດໃນການປຸກຢາງພາລາ, ໂຄງການສຶກສາສຳຫລວດແຮ່ທາດຕ່າງໆຕື່ມອີກ.

ມາໃນວັນທີ 30 ພຶດສະພາ 2022 ທີ່ຫ້ອງປະຊຸມ ສພຂ, ທ່ານ ຊົມຊື່ນ ໄຊເກີຢາ ຈົ່ງຕົວ ປະທານກວດສອບແຫ່ງລັດປະຈຳພາກເໜືອ ພ້ອມຄະນະກວດສອບອົງການກວດສອບແຫ່ງລັດປະຈຳພາກເໜືອ ໄດ້ເຂົ້າພົບທ່ານ ສົມຈິດ ທັບລະກອນ ຮອງປະທານ ສພຂ; ມີປະທານ-ຮອງປະທານຄະນະກຳມະການ, ຮອງເລຂາທິການ ສພຂ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຄະນະກວດສອບ ອົງການກວດສອບແຫ່ງລັດປະຈຳພາກເໜືອ ໄດ້ແຈ້ງໃຫ້ຊາບວ່າ: ການມາເຄື່ອນໄຫວເຮັດວຽກງານຢູ່ແຂວງຜົ້ງສາລີຄັ້ງນີ້ ແມ່ນເພື່ອການດຳເນີນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແຂວງຜົ້ງສາລີ ເປັນຕົ້ນແມ່ນກວດຄືນຕາມມະຕິຂອງກອງປະຊຸມ ສພຂ ຜົ້ງສາລີ ສະບັບເລກທີ 03/ສພຂ.ຜລ, ລົງວັນທີ 28 ມັງກອນ 2022; ກວດຄືນຜົນການຈັດຕັ້ງປະຕິບັດຄຳແນະນຳກວດສອບປີຜ່ານມາ ສະບັບລົງວັນທີ 6 ກໍລະກົດ 2021; ກວດສອບລະບົບຄວບຄຸມພາຍໃນ ແລະ ຄຸ້ມຄອງເກັບລາຍຮັບຊັບສິນຂອງລັດ; ກວດສອບການຄຸ້ມຄອງລາຍຮັບ-ລາຍຈ່າຍວິຊາການ, ໜີ້ຕ້ອງຮັບ-ຕ້ອງສົ່ງ, ການປະມູນຈັດຊື້-ຈັດຈ້າງ ແລະ ລາຍຮັບ-ລາຍຈ່າຍເພີ່ມ; ກວດສອບການຈັດສັນໂຄງການເຂົ້າໃນການລົງທຶນຂອງລັດ; ກວດສອບການຄຸ້ມຄອງການຈັດເກັບລາຍຮັບຈາກການເຊົ່າສຳປະທານ, ລາຍຮັບສ່ວຍສາອາກອນ, ລາຍຮັບຈາກພາສີທີ່ດິນ, ລາຍຮັບຄ່າທຳນຽມ ແລະ ບໍລິການຂອງບັນດາພະແນກການ ແລະ ການກວດສອບອື່ນໆ; ໄດ້ຮັບຟັງທ່ານ ວິໄຊ ຢ່າງ ຮັກສາການຫົວໜ້າພະແນກ ຕາງໜ້າໃຫ້ອົງການກວດສອບແຫ່ງລັດປະຈຳພາກເໜືອ ຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຜູ້ຊີ້ນຳ ແລະ ຄະນະກວດສອບແຫ່ງລັດ ການດຳເນີນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ແຂວງຜົ້ງສາລີ ສະບັບເລກທີ 358/ອກສລ, ລົງວັນທີ 28 ເມສາ 2022 ແລະ ລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດການກວດສອບໃນໄລຍະຜ່ານມາ.

ໂອກາດດັ່ງກ່າວ, ທ່ານ ສົມຈິດ ທັບລະກອນ ຕາງໜ້າໃຫ້ຄະນະປະຈຳ ສພຂ ໄດ້ມີຄຳເຫັນຕໍ່ຄະນະກວດສອບອົງການກວດສອບແຫ່ງລັດປະຈຳພາກເໜືອ ເຊິ່ງທ່ານກໍໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ຄະນະທີມງານທີ່ໄດ້ເອົາໃຈໃສ່ໃນການກວດສອບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງຜົ້ງສາລີ ແລະ ຫລາຍບັນຫາທີ່ໄດ້ກວດພົບກໍໄດ້ຮັບການແກ້ໄຂຕາມລະບຽບກົດໝາຍ. ຈາກນັ້ນ, ວິຊາການທີ່ກ່ຽວຂ້ອງຂອງ ສພຂ ແລະ ຄະນະກວດສອບອົງການກວດສອບແຫ່ງລັດປະຈຳພາກເໜືອ ແລກປ່ຽນບາງບົດຮຽນ ເປັນຕົ້ນແມ່ນຂອດການປະສານງານລະຫວ່າງ ສພຂ ກັບອົງການກວດສອບແຫ່ງລັດປະຈຳພາກເໜືອ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)


ເຂົ້າພົບຮອງປະທານ ສພຂ

# ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ທີ່ຕິດພັນກັບຂົງເຂດຕ່າງໆ ແລະ 2 ວາລະແຫ່ງຊາດ



(ສພຊ) ໃນວັນທີ 25-26 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ໄຂກອງປະຊຸມຂຶ້ນທີ່ຫ້ອງປະຊຸມພູເບ້ຍ ຊັ້ນ 5 ຕຶກຫ້ອງວ່າການແຂວງຫລັງໃໝ່ ພາຍໃຕ້ການເປັນປະທານຂອງທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 18, ປະທານ ສພຂ ໄຊສົມບູນ ແລະ ເຂົ້າຮ່ວມໂດຍທ່ານ ສຸກສະຫວາດ ວົງພູມເຫລັກ ຮອງເຈົ້າແຂວງ ແຂວງໄຊສົມບູນ, ມີ ສສຊ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ບັນດາຫົວໜ້າ-ຮອງຫົວໜ້າພະແນກ, ອົງການ, ກົມກອງ ຕະຫລອດຮອດຫົວໜ້າບໍລິສັດ-ລັດວິສາຫະກິດອ້ອມຂ້າງແຂວງໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ແດງ ປະທຸມທອງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ທ່ານໃຫ້ຮູ້ວ່າ: ເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ໄຊສົມບູນ ທີ່ຕ້ອງໄດ້ຜັນຂະຫຍາຍມະຕິ ແລະ ກົດໝາຍລັດຖະທຳມະນູນຕ່າງໆ ທີ່ແຂວງໄຊສົມບູນ ໄດ້ນຳໃຊ້ປະຕິບັດຈັດຕັ້ງໃນໄລຍະຜ່ານມາ ຈຶ່ງຕ້ອງໄດ້ເປີດກອງປະຊຸມຕິດຕາມກວດກາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ທີ່ຕິດພັນກັບຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ, ຂົງເຂດຍຸຕິທຳ ແລະ 2 ວາລະແຫ່ງຊາດຢ່າງຖືກຕ້ອງ, ສອດຄ່ອງຕາມລະບຽບ ແລະ ຫລັກການຂອງພັກ-ລັດ ວາງອອກຢ່າງເຂັ້ມງວດ ເຊິ່ງ ສພຂ ໄດ້ມີຄຳຖາມເຈາະຈີ້ມຫາພະແນກການ, ອົງການ ແລະ ກົມກອງກ່ອນໜ້ານີ້ແລ້ວ.

ໃນໂອກາດນີ້, ທີ່ປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງໄຊສົມບູນ ໂດຍທ່ານ ສຸກສະຫວາດ ວົງພູມເຫລັກ; ຮັບຟັງການລາຍງານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ຕາມການເຈາະຈີ້ມ ໂດຍທ່ານ ສົມບູນ ສອນລິດທິເດດ ຫົວໜ້າຫ້ອງວ່າການແຂວງ; ຮັບຟັງການລາຍງານຂອງພະແນກກະສິກຳ ແລະ ປ່າໄມ້ ຕາມການເຈາະຈີ້ມ ໂດຍທ່ານ ບຸນທອນ ປັນແກ້ວ ຮອງຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກຊັບພະຍາກອນ, ທຳມະຊາດ ແລະ ສິ່ງແວດລ້ອມ ຕາມການເຈາະຈີ້ມ ໂດຍທ່ານ ແສງປັນຍາ ລັດຕະນະວົງ ຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກການເງິນ ຕາມການເຈາະຈີ້ມ ໂດຍທ່ານ ມີໄຊ ຊຸນພົນ ຮອງຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກແຜນການ ແລະ ການລົງທຶນ ຕາມການເຈາະຈີ້ມ ໂດຍທ່ານ ພູຜັດ ສິງທາວົງໄຊ ຮອງຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກພະລັງງານ ແລະ ບໍ່ແຮ່ ຕາມຄຳຖາມເຈາະຈີ້ມ; ຮັບຟັງການລາຍງານຂອງພະແນກອຸດສາຫະກຳ ແລະ ການຄ້າ ຕາມຄຳຖາມເຈາະຈີ້ມ ໂດຍທ່ານ ພາທໍ່ ຕົ່ງເຢີທໍ່; ຮັບຟັງການລາຍງານຂອງພະແນກໂຍທາທິການ ແລະ ຂົນສົ່ງ ຕາມຄຳເຈາະຈີ້ມ ໂດຍທ່ານ ໄຊສົມພັນ ລີເຕັ່ງເບລຍຈື້ ຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກຖະແຫລ່ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍທ່ານ ກົ່ງເພັດ ມະນີຈັນ ຮອງຫົວໜ້າພະແນກ; ຮັບຟັງການລາຍງານຂອງພະແນກສຶກສາທິການ ແລະ ກິລາ ໂດຍທ່ານ ຍົງຢື ລີເຢ່ຍວື່; ຮັບຟັງການລາຍງານຂອງພະແນກສາທາລະນະສຸກ ໂດຍທ່ານ ດຣ ລີເຢີ ໄຊຍະຊ້າງ ຕາມຄຳຖາມເຈາະຈີ້ມ; ຮັບຟັງການລາຍງານຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ຕາມຄຳເຈາະຈີ້ມ ໂດຍທ່ານ ວັນຄຳເກົ່ງ ຢ່າຊົ່ງກົວ ຫົວໜ້າພະແນກ ແລະ ຮັບຟັງການລາຍງານຂອງພະແນກຍຸຕິທຳ ຕາມຄຳເຈາະຈີ້ມ ໂດຍທ່ານ ລືຢ່າງ ວ່າງເຢັ້ງ ຮອງຫົວໜ້າພະແນກ.

ພ້ອມນັ້ນ, ສສຊ ປະຈຳເຂດເລືອກຕັ້ງ ໄດ້ປະກອບຄຳເຫັນໃສ່ບົດລາຍງານຕ່າງໆ ທີ່ບັນດາພະແນກການໄດ້ລາຍງານ ເພື່ອໃຫ້ແຕ່ລະພະແນກ, ອົງການ ແລະ ກົມກອງ ທີ່ຜ່ານການຈັດຕັ້ງປະຕິບັດຕົວຈິງນັ້ນ ຂຶ້ນຊີ້ແຈງ, ອະທິບາຍຕໍ່ຄຳຊັກຖາມຕື່ມ ທີ່ເຫັນວ່າຍັງບໍ່ແທດເໝາະກັບສະພາບຄວາມເປັນຈິງ ເພື່ອໃຫ້ການນຳໃຊ້ ແລະ ປະຕິບັດຈັດຕັ້ງ ກົດໝາຍລັດຖະທຳມະນູນຕ່າງໆ ມີຄວາມຮັດກຸມ ແລະ ສັກສິດຂຶ້ນຕື່ມ ກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາສອງວັນດ້ວຍກັນຈຶ່ງສຳເລັດ.

(ນາງ ອຳໄພພອນ ແກ້ວວິໄລ)

# ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ສພຂ ວຽງຈັນ



(ສພຊ) ໃນວັນທີ 24 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ເປີດກອງປະຊຸມເຝິກອົບຮົມແນະນຳດ້ານຫລັກການເຕັກນິກການສ້າງ-ຮ່າງເອກະສານທາງລັດຖະການ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນ ສພຂ ວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳຫລ້າ ສີສຸວົງ ເລຂາທິການ ສພຂ ວຽງຈັນ; ມີຮອງເລຂາທິການ ສພຂ, ວິທະຍາກອນທີ່ມາຈາກພະແນກພາຍໃນແຂວງ, ບັນດາຫົວໜ້າຂະແໜງ-ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ພາຍໃນສະພາປະຊາ ຊົນແຂວງ ເປັນຕົ້ນແມ່ນການເຝິກຫລັກການເຕັກນິກການສ້າງ-ຮ່າງເອກະສານທາງລັດຖະການ ເພື່ອຮັບປະກັນການເປັນເສນາທິການທີ່ມີຄວາມຮູ້-ຄວາມສາມາດ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ພ້ອມທັງເປັນການຍົກລະດັບຄວາມຮູ້ຄວາມສາມາດຂອງຕົນໃຫ້ມີຄຸນນະພາບ ແລະ ສຳເລັດຕາມລະດັບຄາດໝາຍໃນແຕ່ລະໄລຍະ.

ກອງປະຊຸມຄັ້ງນີ້, ວິທະຍາກອນໄດ້ສະເໜີກ່ຽວກັບຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍເອກະສານ, ຮູບຮ່າງເອກະສານທາງລັດຖະການ, ການນຳໃຊ້ຂະໜາດຕົວອັກສອນ ແລະ ອື່ນໆ ທີ່ຕິດພັນກັບການຮ່າງເອກະສານ ເພື່ອໃຫ້ພະນັກງານ-ລັດຖະກອນທີ່ເຂົ້າຮ່ວມເຝິກອົບຮົມໄດ້ຮຽນຮູ້ ແລະ ສ້າງຄວາມເຂົ້າໃຈ ເພື່ອໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງ, ດ້ວຍບັນຍາກາດຟົດຟື້ນ ບັນດາທ່ານວິທະຍາກອນ ໄດ້ຖ່າຍທອດຄວາມຮູ້, ວິທີການ, ຮູບແບບການສົນທະນາ, ແລກປ່ຽນບົດຮຽນ ຄຽງຄູ່ກັບການເຝິກປະຕິບັດຕົວຈິງ, ສຸມໃສ່ປະກອບຄຳຄິດ-ຄຳເຫັນ ເພື່ອຈະໄດ້ນຳເອົາບົດຮຽນດັ່ງກ່າວ ໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ ພ້ອມທັງເປັນການປັບປຸງແບບແຜນວິທີເຮັດວຽກໃຫ້ມີຄຸນນະພາບດີຂຶ້ນໄປເລື້ອຍໆ.

(ນັກຂ່າວ ສພຂ ວຽງຈັນ)

**108 ສາລະ**

# ປູກຈິດສຳນຶກໃຫ້ໂລກໜ້າຢູ່

# ໂດຍ: ຫລານລຽງຊາດ



ໃນຍຸກທີ່ເສດຖະກິດຂະຫຍາຍໂຕຢ່າງບໍ່ຢຸດຢັ້ງ ກະແສອະນຸລັກສິ່ງແວດລ້ອມກໍຂະຫຍາຍຕົວຢ່າງເປັນຂະບວນການໂດດເດັ່ນເຊັ່ນດຽວກັນ, ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການທົ່ວໂລກ ຕ່າງກໍຮ່ວມມືກັນເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ, ປູກຈິດສຳນຶກໃຫ້ລູກຫລານອະນຸລັກສິ່ງແວດລ້ອມ ແລະ ພັດທະນາສັງຄົມສີຂຽວ ໃຫ້ເຕີບໃຫຍ່ຂະຫຍາຍໂຕໄປຄຽງຄູ່ກັບການພັດທະນາເສດຖະກິດ; ນັກອະນຸລັກສິ່ງແວດລ້ອມຍັງໄດ້ມີຊື່ເອີ້ນຂະບວນການແນວຄວາມຄິດນີ້ວ່າ "ການບໍ່ສ້າງຂີ້ເຫຍື້ອ (Zero waste)" ຕໍ່ກັບສະພາບການໃນປັດຈຸບັນ ທ່ານເດມີຄວາມຄິດເຫັນແນວໃດ ກ່ຽວກັບກະແສນິຍົມທີ່ກວ້າງຂວາງໃນການພັດທະນາແບບຍືນຍົງ ເພື່ອໃຫ້ສັງຄົມເປັນສັງຄົມສີຂຽວ ແລະ ໜ້າຢູ່ຍິ່ງຂຶ້ນ ບວກກັບສະພາບການທີ່ທົ່ວໂລກກຳລັງຕໍ່ສູ້ກັບພະຍາດໂຄວິດ ທີ່ບໍ່ຮູ້ວ່າເມື່ອໃດມັນຈະຫວິດໄປຈາກເຮົານັ້ນ ຍິ່ງຄວນຕ້ອງມີສະຕິເອົາໃຈໃສ່ປະຢັດຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ເພາະອະນາຄົດເປັນສິ່ງທີ່ບໍ່ແນ່ນອນ, ມະນຸດ ແລະ ທຳມະຊາດຕ່າງກໍເພິ່ງພາອາໄສເຊິ່ງກັນແລະກັນ.

ການຮັກສາສິ່ງແວດລ້ອມແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງໝົດທຸກຄົນ ໂດຍການເລີ່ມຈາກຕົວເຮົາເອງ, ຄອບຄົວ, ສັງຄົມອ້ອມຂ້າງ ກໍສາມາດຊ່ວຍໂລກໃຫ້ສວຍງາມຂຶ້ນໄດ້, ຢ່າຖືເປັນສິ່ງໜ້າອາຍຫາກຈະເປັນຜູ້ລິເລີ່ມ, ພວກເຮົາມາຊ່ວຍກັນຫັນສັງຄົມໃຫ້ເປັນສັງຄົມສະອາດ ເພາະເມື່ອຂີ້ເຫຍື້ອໜ້ອຍລົງອຸດສາຫະກຳແປຮູບກໍຈະໃຊ້ພະລັງງານໜ້ອຍລົງ ເຮັດໃຫ້ການປ່ອຍອາຍເສຍກໍຈະໜ້ອຍລົງໄປນຳ; ຈຶ່ງເຮັດໃຫ້ເຮົາສາມາດສູດອາກາດສົດໄດ້ເຕັມປອດໃນທຸກໆມື້; ສິ່ງສຳຄັນຄືການໃຫ້ກຳລັງໃຈ ແລະ ສ້າງແບບຢ່າງ ໃຫ້ກາຍເປັນກະແສນິຍົມດ້ານບວກ, ປູກຝັງທັດສະນະສີຂຽວໃຫ້ເຍົາວະຊົນຄົນຮຸ່ນໜຸ່ມ ກໍຄືລູກຫລານ ແລະ ກະຕຸກຊຸກຍູ້ສັງຄົມໃຫ້ໜ້າຢູ່ຂຶ້ນໄປ. ພ້ອມນັ້ນ, ຍັງເປັນການປະກອບສ່ວນສ້າງສາປະເທດຊາດ ຕາມມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ ທີ່ລັດຖະບານໄດ້ວາງອອກ ໃຫ້ມີປະສິດທິພາບຍິ່ງຂຶ້ນ.

ແລ້ວທ່ານເດ ມີຄວາມປະສົງທີ່ຢາກຈະຊ່ວຍສັງຄົມ ຫລື ສ້າງສັງຄົມໃຫ້ເປັນສີຂຽວເພື່ອໃຫ້ໂລກໜ້າຢູ່ຫລືບໍ່; ສະນັ້ນ, ເຮົາລອງມາປັບປ່ຽນກິດຈະວັດປະຈຳວັນຂອງເຮົາ ເພື່ອຈຳກັດຂີ້ເຫຍື້ອ ມີຫຍັງແດ່?

1. ຊື້ເຄື່ອງໜ້ອຍລົງ: ໂດຍຈຳກັດການຊື້ໃຫ້ຫລຸດລົງ ເພື່ອບໍ່ໃຫ້ເສຍເວລາກັບການມ້ຽນມັດ, ສັບຊ້ອນເພື່ອບໍລິຈາກ, ຂາຍເປັນເຄື່ອງມືສອງ ຫລື ກາຍເປັນຂີ້ເຫື້ອຍກອງໃຫຍ່ທີ່ສຸດ;

2. ຖືຖົງຜ້າໃນເວລາໄປຊື້ເຄື່ອງຢູ່ຕະຫລາດ ເພື່ອຫລີກລ່ຽງການນຳເອົາຖົງຢາງກັບມາເຮືອນ: ໂດຍປະຕິເສດການນຳໃຊ້ຖົງພາລາສຕິກໃນເວລາຊື້ອາຫານ, ເລືອກວັດຖຸພັນທີ່ຍ່ອຍສະຫລາຍງ່າຍ ຫລື ສາມາດນຳມາໃຊ້ຊ້ຳໄດ້ຫລາຍໆເທື່ອ ເຊັ່ນ ຊື້ຊີ້ນໝູ ຫລື ຂອງປຽກ, ແຫລວກໍຄວນນຳເອົາກ່ອງໄປແຕ່ເຮືອນ ເພື່ອໃສ່ອາຫານກັບມາບ້ານໄດ້.

3. ກຽມຖົງຜ້າ ແລະ ກັບ/ກ່ອງເປົ່າ ທີ່ສະອາດໄວ້ໃນລົດເປັນປະຈຳ ເພື່ອໃສ່ອາຫານ ຫລື ຂອງກິນສຸກ ໂດຍຫລີກລ່ຽງການໃສ່ກ່ອງໂຟມ ຫລື ຖົງຢາງປລາສະຕິກ;

4. ພົກພາກະຕຸກນ້ຳດື່ມຂອງຕົນເອງ ແລະ ແຕ່ງອາຫານໄປກິນເອງ: ເຖິງບ້ານເຮົາຈະຍັງບໍ່ທັນມີນ້ຳດື່ມສະອາດທີ່ສາມາດດື່ມໄດ້ທົ່ວໄປຄືຫລາຍປະເທດ ແຕ່ການມີກະຕຸກນ້ຳດື່ມສ່ວນຕົວ ກໍຊ່ວຍຫລຸດພາລາສຕິກໄດ້ຫລາຍສົມຄວນ ທັງເປັນການປະຢັດເວລາ ແລະ ລາຍຈ່າຍຕື່ມອີກດ້ວຍ.

5. ການແຍກປະເພດຂີ້ເຫຍື້ອ: ແຍກເສດອາຫານທີ່ສາມາດຍ່ອຍສະຫລາຍໄດ້ ເຊັ່ນ ຜັກ ແລະ ໝາກໄມ້ຕ່າງໆ ເພື່ອນຳໄປຝັງດິນ ຫລື ເຮັດປຸຍຊີວະພາບ ເພື່ອນຳໄວ້ໃຊ້ໃນສວນຄົວຂອງຕົນ.

6. ເລືອກການຍ່າງ ແທນການໃຊ້ລົດ ເພາະນອກຈາກປະຢັດຄ່ານ້ຳມັນແລ້ວ ຍັງໄດ້ສຸຂະພາບ ແລະ ຍັງຫລຸດຜ່ອນມົນລະພິດນຳອີກ;

7. ໃຊ້ເຄື່ອງຂອງທີ່ມີ ໃຫ້ເກີດປະໂຫຍດສູງສຸດ: ຖ້າເປ່ເພກໍເອົາໄປແປງເພື່ອນຳມາໃຊ້ຄືນ.

8. ປະດິດສິ່ງຂອງດ້ວຍຕົນເອງ: ຮຽນຮູ້ທີ່ຈະໝູນໃຊ້, ສ້ອມແປງ ຫລື ປະດິດສິ່ງຂອງຕ່າງໆດ້ວຍຕົນເອງ ໂດຍການຫາຂໍ້ມູນໄດ້ຈາກອິນເຕີເນັດ ເພື່ອປະດິດສິ່ງຂອງຕ່າງໆໄວ້ໃຊ້ເອງ ໂດຍຫລີກລ່ຽງອຸປະກອນທີ່ກ່ຽວກັບໄຟຟ້າ ຫລື ວັດຖຸໄວໄຟທີ່ອັນຕະລາຍ.

9. ຫັນເປັນດີຈີຕອນ ຫລື ຫັນເປັນທັນສະໄໝໃຫ້ທັນໂລກສາກົນ ໂດຍຫລີກລ່ຽງການໃຊ້ເຈ້ຍ ເຊິ່ງໝູນໃຊ້ລະບົບດີຈີຕອນເຂົ້າໃນທຸກວຽກງານ ເຊັ່ນ ການຊຳລະບິນ, ວຽກງານເອກະສານຕ່າງໆ.

10. ເຝິກຈິດຂຽວສະອາດ: ໝາຍເຖິງມີສະຕິສີຂຽວຕະຫລອດເວລາ, ກວດເບິ່ງອຸປະກອນເອເລັກໂທນິກ, ເຄື່ອງໃຊ້ໄຟຟ້າຕ່າງໆ ຫາກນຳໃຊ້ແລ້ວຄວນໃຫ້ຖອດປັກສຽບທຸກເທື່ອ ກ່ອນອອກຈາກເຮືອນ ຫລື ຫ້ອງການ.

ສຳລັບ 10 ຂໍ້ທີ່ກ່າວມານັ້ນ ມັນອາດຈະເປັນເລື່ອງທີ່ຫຍຸ້ງຍາກໃນເບື້ອງຕົ້ນ ແຕ່ຖ້າປະຕິບັດເລື້ອຍໆຈົນກາຍເປັນຄວາມຊິນເຄີຍ ເຊື່ອວ່າມັນຈະກາຍເປັນນິໄສອັນດີຕິດຕົວເຮົາໄປຕະຫລອດ ແລະ ຜົນທີ່ໄດ້ຮັບກໍຈະຊ່ວຍໃຫ້ເຮົາມີສຸຂະພາບທີ່ແຂງແຮງ, ຊີວິດຍືນຍາວ ແລະ ວິຖີຊີວິດລຽບງ່າຍຂຶ້ນໄປຫລາຍລະດັບ;

**ຮຽບຮຽງຈາກ: WWW. theguardian.com**

**ສາລາກະວີ**

# ບຸກໜ້າ ກ້າເຮັດ

# ໂດຍ: ອ້ວນ ຄຳມີໄຊ

| | |
|---|---|
| ❈ ທ່າມກາງຄວາມຍາກຫຍຸ້ງ | ຄາຊຸ່ນເຄືອງໝອງ |
| ຕ້ອງຊ່ວຍຊູໂຊມດັນ | ເລັ່ງແລດຶງຍູ້ |
| ສູ້ຊົນປະໂຄມກັນກ້າວ | ຫລາຍມືປະກອບສ່ວນ |
| ບໍ່ແມ່ນຊວນແຕ່ເວົ້າ | |
| ເມົາຖະແຫລງລ່າຍລ້າ | ຄາສິ້ນສ່ວນກະທຳ ນັ້ນນາ! |
| | |
| ❈ ບ່ອນໃດຄາຂັດຂ້ອງ | ມົວນັ່ງນອນເສີຍ ບໍ່ເປັນຕິ! |
| ຕ້ອງຝ້າວພາກັນຄິດ | ອ່ານໄຂວິທີແກ້ |
| ແນໃສ່ຫັນຫານເຂົ້າ | ລະດົມຄົນຂະບວນເຄື່ອນ |
| ເໝືອນຍາມຍໍຍົກໄມ້ | |
| ປາຍກົມແກນໃຫຍ່ຕົ້ນ | ຄົນໜ້ອຍບໍ່ທ່ອນເປັນ ຊັ້ນແລ! |
| | |
| ❈ ສ້າງຊາດ...ໃຜກໍຈາເອີ່ຍເວົ້າ | ວອນວ່າວາງໄຂ ຈິງແລ້ວ |
| ໃຜເດຈິງໃຈທຳ | ທ່ຽງທົນສະເໝີແທ້ |
| ຫາກແມ່ນມວນຊົນເຊື້ອ | ມະຫາສານສຸມໃສ່ |
| ຕະລຸມບອນໃຫຍ່ນ້ອຍ | |
| ຄອຍໄຂທັງງັດໄງ້ | ໃນສິ້ນສ່ວນບໍ່ດີ ຊັ້ນຕວ່າ |
| | |
| ❈ ສ່ວນວ່າຊາວໜຸ່ມແໜ້ນ | ກຳລັງໃຫຍ່ມະຫາສານ ເຮົານີ້! |
| ຄວນທີ່ເປັນແກນຫລັກ | ເປັ່ງແປວໄຟແຈ້ງ |
| ໂຮມແຮງຊູໂຊມອູ້ມ | ຄວາມຫວັງສັງຄົມໃໝ່ |
| ບຸກໃສ່ບືນເບີກບັ້ນ | |
| ຂະຫຍັນພຽນພໍ່າສ້າງ | ທາງຮູ້ຮ່ອມເດີນ ເທາະນາ! |
| | |
| ❈ ໝາຍໝັ້ນຮຽນຮ່ຳຮູ້ | ຊູໃສ່ວິຊາການ ຍຸກນີ້ |
| ສິ່ງໃດດີລະດົມເຮັດ | ຮ່ວມແຮງໂຮມເຮົ້າ |
| ພົບບ່ອນເປົາບາງຂ້ອງ | ຄຸງເຄືອງຄາຍາກ |
| ບາກບັ່ນບືນບໍ່ຢ້ານ | |
| ອາດຫານຕີຕ່ອຍຕ້ານ | ຂານເຂົ້າເຄື່ອນຂະບວນ ແທ້ເນີ! |



**ສຸກສະບາຍກາຍໃຈດີ**

# ເສັ້ນເລືອດຫົວໃຈຕີບ ສາເຫດຫລັກ ຂອງຫົວໃຈຂາດເລືອດ

# ໂດຍ: ສາວແອ່ນ



ພະຍາດເສັ້ນເລືອດຫົວໃຈຕີບ ຫລື ໂລກຫລອດເລືອດຫົວໃຈ ເກີດຈາກການສະສົມຂອງຄໍເລດເຕີຣໍ ແລະ ສານຕ່າງໆພາຍໃນເສັ້ນເລືອດ ຈົນກາຍເປັນໄຂມັນ (Plaque) ເກາະຕິດຕາມເສັ້ນເລືອດ ເຮັດໃຫ້ເສັ້ນເລືອດນ້ອຍລົງ ຫລືການແຕກຫັກຂອງໄຂມັນ ໄປກີດຂວາງການໄຫລວຽນຂອງເລືອດ ຖ້າປາກົດການນີ້ເກີດຂຶ້ນໃນເສັ້ນເລືອດທີ່ໄປຫລໍ່ລ້ຽງຫົວໃຈ ການສະໜອງເລືອດໃຫ້ແກ່ຫົວໃຈກໍຈະຫລຸດລົງ ເຮັດໃຫ້ເກີດອາການກ້າມເນື້ອຫົວໃຈຂາດເລືອດກະທັນຫັນ ເຊິ່ງຖ້າຮ້າຍແຮງກໍອາດເຮັດໃຫ້ເສຍຊີວິດໄດ້; ດັ່ງນັ້ນ, ໃນຄໍລຳສຸສະບາຍກາຍໂລຄາສະບັບນີ້ ເຮົາມີສາເຫດ ແລະ ອາການຂອງໂລກນີ້ມານຳສະເໜີໃຫ້ແກ່ທ່ານໄດ້ຮັບຮູ້ນຳກັນ:

ອາການທີ່ສາມາດພົບເຫັນໄດ້ໃນຄົນເຈັບທີ່ເປັນພະຍາດເສັ້ນເລືອດຕີບ ແລ້ວຫົວໃຈເກີດອາການຫົວໃຈຂາດເລືອດ ໄດ້ແກ່:

- ຮູ້ສຶກເຈັບໜ້າເອິກຢ່າງຮຸນແຮງ, ແໜ້ນໜ້າເອິກຈົນຫາຍໃຈບໍ່ໄດ້ ເຊິ່ງມັກຈະເກີດຢູ່ກາງເອິກ ຫລື ປວດລາມໄປໜ້າເອິກທາງເບື້ອງຊ້າຍ;
- ອ່ອນເພຍ, ບໍ່ມີແຮງ ແລະ ເມື່ອຍງ່າຍ;
- ບາງຄັ້ງມີອາການໃຈສັ່ນ ແລະ ມີເຫື່ອອອກນຳອີກ;
- ໜ້າມືດ, ເປັນລົມໝົດສະຕິ, ຫົວໃຈຢຸດເຕັ້ນ ແລະ ຖ້າຮຸນແຮງກໍຈະເສຍຊີວິດທັນທີ.

ສາເຫດ ຫລື ປັດໄຈສ່ຽງຂອງພະຍາດຫລອດເລືອດຫົວໃຈຕີບແມ່ນມາຈາກຫລາຍສາເຫດຄື:

- ອາຍຸຫລາຍຂຶ້ນ;
- ມີຄໍເລດເຕີຣໍ ແລະ ລະດັບໄຂມັນໃນເລືອດສູງ;
- ເປັນພະຍາດເບົາຫວານ;
- ມີຄວາມດັນເລືອດສູງ;
- ໂລກອ້ວນ;
- ການດື່ມເຫລົ້າ ແລະ ການສູບຢາ;
- ມີຄວາມຕຶງຄຽດ ຫລື ດຳລົງຊີວິດພາຍໃຕ້ສະຖານະການຕຶງຄຽດເປັນປະຈຳ;
- ຂາດການອອກກຳລັງກາຍ.




# ຍີ່ປຸ່ນ ສະເໜີປັບປຸງກົດໝາຍ ເລັ່ງຍຶດຊັບສິນດິຈິຕອນທີ່ຜິດກົດໝາຍ

**ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ**

ໃນອາທິດຜ່ານມາ ມີລາຍງານຂ່າວໃຫ້ຮູ້ວ່າ: ໜັງສືພິມທ້ອງຖິ່ນຂອງຍີ່ປຸ່ນ ໄດ້ລາຍງານວ່າ ກະຊວງຍຸຕິທຳຂອງປະເທດກຳລັງພິຈາລະນາສະເໜີຈະຍຶດຊັບສິນດິຈິຕອນທີ່ໄດ້ມາຢ່າງຜິດກົດໝາຍ ເພື່ອຢຸດການກໍ່ອາຊະຍາກຳທາງອິນເຕີເນັດ.

ກະຊວງຍຸຕິທຳຍີ່ປຸ່ນ ພວມພິຈາລະນາປັບປຸງກົດໝາຍທີ່ແນໃສ່ແກ້ໄຂການບັນຫາການກໍ່ອາຊະຍາກຳ ເພື່ອກຳນົດຢ່າງຈະແຈ້ງວ່າ ຊັບສິນດິຈິຕອນທີ່ໄດ້ມາຢ່າງຜິດກົດໝາຍ ໂດຍກຸ່ມອາຊະຍາກຳ ແລະ ອື່ນໆ ອາດຈະຖືກຍຶດ.

ໃນປັດຈຸບັນ, ກົດໝາຍວ່າດ້ວຍການລົງໂທດກຸ່ມອາຊະຍາກຳ ບໍ່ໄດ້ກຳນົດວິທີການຈັດການກັບຊັບສິນດິຈິຕອນທີ່ໄດ້ມາຢ່າງຜິດກົດໝາຍ ດັ່ງນັ້ນ, ກຸ່ມອາຊະຍາກຳອາດຈະໃຊ້ປະໂຫຍດຈາກບັນຫານີ້ ແລະ ນຳໃຊ້ຊັບສິນດິຈິຕອນໃນການຟອກເງິນ ແລະ ກໍ່ອາຊະຍາກຳອື່ນໆ.

ເພື່ອຮັບປະກັນວ່າການຍຶດຊັບສິນທາງອາຍາທັງໝົດແມ່ນດຳເນີນໄປຕາມກົດໝາຍຂອງປະເທດ, ກະຊວງຍຸຕິທຳຈະຂໍຄວາມຄິດເຫັນຈາກສະພານິຕິບັນຍັດ ເຊິ່ງຄາດວ່າຈະໃຫ້ຄຳແນະນຳລັດຖະມົນຕີກະຊວງຍຸຕິທຳພາຍໃນເດືອນນີ້ ແລະ ຈະເລີ່ມດຳເນີນການປຶກສາຫາລືຢ່າງລະອຽດ ເພື່ອຮ່າງກົດໝາຍສະບັບປັບປຸງດັ່ງກ່າວ.

ພາຍໃຕ້ກົດໝາຍປັດຈຸບັນ ປະເພດຂອງຊັບສິນທີ່ສາມາດຍຶດໄດ້ໃນປະເທດຍີ່ປຸ່ນມີ: ອະສັງຫາລິມະຊັບ, ສັງຫາລິມະຊັບ ແລະ ການຮຽກຮ້ອງທາງດ້ານການເງິນ.

ແຕ່ເນື່ອງຈາກວ່າຊັບສິນດິຈິຕອນ ບໍ່ແມ່ນສະກຸນເງິນທີ່ສາມາດຈັບຕ້ອງໄດ້, ບໍ່ໄດ້ຮັບການສະໜັບສະໜູນຈາກປະເທດ ຫລື ທະນາຄານກາງ ດັ່ງນັ້ນ, ສັບຊິນດັ່ງກ່າວຈຶ່ງຖືກພິຈາລະນາວ່າບໍ່ໃຫ້ຕົກຢູ່ພາຍໃຕ້ໝວດໝູ່ຂອງການຮຽກຮ້ອງທາງດ້ານການເງິນ.

**ແຫລ່ງຂໍ້ມູນ: beincrypto**



# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 48 ການຈົດທະບຽນໂອນກຳມະສິດ**

ການຊື້ ຂາຍ ແລະ ການມອບຍານພາຫະນະນັ້ນ ຕ້ອງໄດ້ຈົດທະບຽນໂອນກຳມະສິດຢູ່ ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນຊື້ ຂາຍ ຫຼື ມອບເປັນຕົ້ນໄປ ໂດຍຮັກສາປ້າຍທະບຽນເດີມໄວ້.

ການຈົດທະບຽນໂອນກຳມະສິດນັ້ນ ຕ້ອງໄດ້ເອົາຍານພາຫະນະໄປກວດກາຕົວຈິງ ແລະ ເສຍຄ່າທຳນຽມ ແລະ ບໍລິການຕ່າງໆຕາມລະບຽບການ.

ສຳລັບ ການຈົດທະບຽນໂອນກຳມະສິດຍານພາຫະນະບໍລິຫານຂອງລັດ ໃຫ້ປະຕິບັດຕາມລະບຽບການສະເພາະ.

**ມາດຕາ 49 ການຍົກຍ້າຍຍານພາຫະນະທາງບົກ**

ການຍົກຍ້າຍຍານພາຫະນະທາງບົກ ແມ່ນການຍົກຍ້າຍຍານພາຫະນະພ້ອມດ້ວຍເອກະສານ ທີ່ໄດ້ຂຶ້ນທະບຽນຢູ່ແຂວງໜຶ່ງ ໄປຂຶ້ນທະບຽນເພື່ອນຳໃຊ້ຢູ່ແຂວງອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຍົກຍ້າຍຍານພາຫະນະທາງບົກ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການແຈ້ງຍົກຍ້າຍຍານພາຫະນະ ອອກ

1) ຍື່ນຄຳຮ້ອງຂໍຍົກຍ້າຍອອກຕາມແບບພິມ ພ້ອມດ້ວຍ ໃບທະບຽນຍານພາຫະນະ, ປຶ້ມຕິດ ຕາມການຂຶ້ນທະບຽນຍານພາຫະນະ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ສັນຍາ ຊື້ ຂາຍ, ໃບມອບກຳມະສິດ, ຂໍ້ຕົກລົງຍົກຍ້າຍຍານພາຫະນະ ໃນກໍລະນີ ລົດບໍລິຫານຂອງລັດ;

2) ເສຍ ຄ່າທຳນຽມ ແລະ ຄ່າບໍລິການ, ກອງທະບຽນຍານພາຫະນະທາງບົກ ຕ້ອງອອກໃບຍົກ ຍ້າຍ ພ້ອມທັງເອກະສານຫຼັກຖານຂອງລົດ ແລ້ວລຶບລ້າງເອກະສານຍານພາຫະນະຄັນດັ່ງກ່າວ ອອກຈາກລະບົບການຂຶ້ນທະບຽນຢູ່ແຂວງຕົ້ນທາງ.

ກອງທະບຽນຍານພາຫະນະທາງບົກແຂວງ, ນະຄອນຫຼວງຕ້ອງພິຈາລະນາອອກໃບຍົກຍ້າຍຍານພາຫະນະທາງບົກ ພາຍໃນເວລາ ຫ້າວັນ ລັດຖະການ.

2. ການແຈ້ງຍົກຍ້າຍຍານພາຫະນະ ເຂົ້າ

1) ຍື່ນຄຳຮ້ອງຂໍຍົກຍ້າຍເຂົ້າຕາມແບບພິມ ພ້ອມດ້ວຍເອກະສານຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1) ແລະ ຂໍ້ 2) ຂອງການແຈ້ງຍົກຍ້າຍຍານພາຫະນະ ອອກ;

2) ນຳລົດໄປກວດກາຕົວຈິງ ສົມທຽບກັບເອກະສານເດີມ;

3) ປົດປ້າຍທະບຽນເກົ່າ ພ້ອມທັງທຳລາຍຖິ້ມ ແລ້ວຕິດປ້າຍທະບຽນໃໝ່;

4) ເສຍ ຄ່າທຳນຽມ ແລະ ບໍລິການ.

ອ່ານຕໍ່ສະບັບໜ້າ...

# ຊິເລ ສຳເລັດຮ່າງລັດຖະທຳມະນູນສະບັບໃໝ່ ໃຫ້ສິດປະຊາຊົນລົງຄະແນນສຽງ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**




*ປະເທດຊິເລ ໄດ້ຮ່າງລັດຖະທຳມະນູນສະບັບໃໝ່ສຳເລັດຢ່າງສົມບູນແລ້ວ ເຊິ່ງລັດຖະທຳມະນູນສະບັບນີ້ ໄດ້ກຳນົດສິດທິທາງສັງຄົມ, ສິ່ງແວດລ້ອມ ແລະ ຄວາມສະເໝີພາບ ໂດຍຈະຈັດໃຫ້ປະຊາຊົນລົງຄະແນນສຽງຕໍ່ຮ່າງລັດຖະທຳມະນູນສະບັບໃໝ່ ພາຍໃນເດືອນກັນຍາປີນີ້.*

ຫລັງຈາກລັດຖະສະພາຂອງປະເທດຊິເລ ໄດ້ດຳເນີນການຄົ້ນຄວ້າປຶກສາຫາລືມາເປັນເວລາ 10 ເດືອນ, ເຂົາເຈົ້າໄດ້ສຳເລັດການຮ່າງລັດຖະທຳມະນູນສະບັບໃໝ່ເມື່ອເດືອນພຶດສະພາຜ່ານມາ ແລະ ຈະຈັດການລົງປະຊາມະຕິພາຍໃນປີນີ້ ເຊິ່ງຖ້າການລົງປະຊາມະຕິອອກມາວ່າ ຮັບເອົາຮ່າງລັດຖະທຳມະນູນສະບັບໃໝ່ດັ່ງກ່າວ ຈະປ່ຽນແທນລັດຖະທຳມະນູນສະບັບເກົ່າ ທີ່ຖືກນຳໃຊ້ມາຕັ້ງແຕ່ປີ 1980.

ທ່ານ ນາງ ມາເຣຍ ເອລີຊາ ຄຣິນເທໂຣສ ປະທານສະພາຮ່າງລັດຖະທຳມະນູນ ທີ່ມີສະມາຊິກຈຳນວນ 155 ທ່ານຂອງຊິເລ ກ່າວວ່າ “ລັດຖະທຳມະນູນສະບັບໃໝ່ ແມ່ນລັດຖະທຳມະນູນທີ່ເອົາໃຈໃສ່ເຖິງສິ່ງແວດລ້ອມ, ຄວາມສະເໝີພາບ ແລະ ສິດທິທາງສັງຄົມເປັນຕົ້ນຕໍ”.

ລັດຖະທຳມະນູນສະບັບໃໝ່ຂອງຊິເລ ໄດ້ໃຫ້ຄຳໝັ້ນສັນຍາຈະໃຫ້ຄວາມສຳຄັນແກ່ສິດທິຂອງປະຊາຊົນໃນຫລາຍຂົງເຂດ ລວມທັງສິດໃນການເຂົ້າເຖິງສິດທິຜົນປະໂຫຍດດ້ານສຸຂະພາບທົ່ວປວງຊົນ, ສິດໃນການສຶກສາ, ສະຫວັດດີການບຳນານ ແລະ ການປົກປັກຮັກສາສິ່ງແວດລ້ອມທີ່ດີຂຶ້ນ; ພ້ອມນີ້, ຍັງມີນະໂຍບາຍສົ່ງເສີມຄວາມສະເໝີພາບທາງເພດສະພາບ ແລະ ຄວາມຍຸຕິທຳທາງດ້ານເຊື້ອຊາດ-ສີຜິວອີກດ້ວຍ.

ໃນຮ່າງລັດຖະທຳມະນູນສະບັບໃໝ່ ແມ່ນມີ 499 ມາດຕາ ລວມມີມາດຕະການໄລຍະຂ້າມຜ່ານທີ່ອະທິບາຍເຖິງການຍົກເລີກລະບົບຂອງສະພາສູງ ແລ້ວສ້າງຕັ້ງສະພານິຕິບັນຍັດທີ່ມີສະພາດຽວແທນ. ນອກນັ້ນ, ຍັງມີການຮັບປະກັນສິດທິອະນາໄມການຈະເລີນພັນໃຫ້ແກ່ປະຊາຊົນ ໂດຍກຳນົດໃຫ້ລັດມີໜ້າທີ່ປ້ອງກັນ, ແກ້ໄຂ ຫລື ປັບຕົວເຂົ້າກັບບັນຫາວິກິດການດິນຟ້າອາກາດ ຫລືວິກິດການໂລກຮ້ອນ ແລະ ຍັງເປັນຄັ້ງທຳອິດຂອງປະເທດຊິເລ ທີ່ມີການຮັບຮອງສະຖານະພາບຂອງຊົນເຜົ່າພື້ນເມືອງ ເຊິ່ງຈະເຮັດໃຫ້ມີການຊົດເຊີຍໃຫ້ແກ່ຊົນເຜົ່າພື້ນເມືອງເຫລົ່ານັ້ນ ທີ່ເຂົາເຈົ້າໄດ້ຖືກຂັບໄລ່ອອກຈາກດິນແດນໃນເມື່ອກ່ອນ.

ການລົງປະຊາມະຕິຮ່າງລັດຖະທຳມະນູນຂອງຊິເລ ຈະດຳເນີນໃນວັນທີ 4 ກັນຍາທີ່ຈະມາເຖິງນີ້ ໂດຍຖ້າຮ່າງລັດຖະທຳມະນູນສະບັບນີ້ຜ່ານການເຫັນດີ ກໍຈະໄດ້ຮັບການໃຫ້ສັດຕະຍາບັນເປັນລັດຖະທຳມະນູນໃໝ່ຂອງຊິເລ, ແຕ່ຖ້າການລົງປະຊາມະຕິບໍ່ຜ່ານ ຊິເລຈະຕ້ອງສືບຕໍ່ນຳໃຊ້ຮ່າງລັດຖະທຳມະນູນສະບັບເດີມ ທີ່ນຳໃຊ້ໃນປັດຈຸບັນນີ້.

**ແຫລ່ງຂໍ້ມູນ: www.commondreams.org**

# ໄພສັງຄົມ...?

**ໂດຍ: ດົ້ນກົບເມກ**

ຜູ້ຂຽນເຂົ້າໃຈວ່າໄພສັງຄົມ ຄື: ພຶດຕິກຳສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນ, ຕົນເອງ ແລະ ສັງຄົມສ່ວນລວມ ຫລື ຈະເອີ້ນວ່າປາກົດການຫຍໍ້ທໍ້ຕ່າງໆ ຂຶ້ນຢູ່ກັບຄວາມຮັບຮູ້ ແລະ ເຂົ້າໃຈຂອງແຈຕ່ລະຄົນ ໄລຍະນີ້ຂ່າວປາກົດການສັງຄົມອອນລາຍນອກຈາກມີພວກສວຍໂອກາດຂຶ້ນລາຄານ້ຳມັນ ຫລື ຂາຍໂກງລາຄາແລ້ວ ກໍຍັງມີບັນຫາອື່ນຕາມມາ.

ບັນຫາໄວລຸ້ນ ຫລື ຄົນໜຸ່ມສາວສາຍເລາະ ສາຍທ່ຽວ ທັງເວັນ ແລະ ຄືນ ຈັດກິດຈະກຳສັງສັນຍົກຈອກມຶນເມົາ, ພວກຜີຂີ້ຢາ ຫລື ພວກສາຍເຖື່ອນທີ່ໃຊ້ຢາມຶນເມົາປົນໃສ່ນ້ຳ-ໃສ່ເຫລົ້າເບຍໃນຈອກ ເພື່ອຫວັງຜົນເປົ້າໝາຍໃນທາງບໍ່ດີ ຍິ່ງມີໂອກາດສ້າງກໍ່ພຶດຕິກຳດິບ ໂດຍສະເພາະພວກຍິງສາວກໍແມ່ນຕົກໃນເປົ້າໝາຍ ຫລື ບໍ່ດັ່ງນັ້ນ ກໍແມ່ນເຕັມໃຈສູບ ຫລື ເສບຈົນເກີນຂະໜາດ...

<u>ສຳລັບຜູ້ຂຽນແລ້ວ</u> ສິ່ງທີ່ໜ້າຄິດກໍຄືບັນດາຢາມຶນເມົາ-ຢາເສບຕິດ-ສານເສບຕິດຕ່າງໆນັ້ນ ເຂົາຊື້-ຂາຍກັນແບບໃດ? ແລະ ບັນດາຮ້ານເຫລົ້າ-ຮ້ານບັນເທີງ... ຄືວ່າຂາດການກວດກາ ຫລື ສ້າງລະບຽບຂັ້ນຕອນເຄັ່ງຄັດ ເພື່ອຮັບປະກັນໃຫ້ມ່ວນຊື່ນແຕ່ບໍ່ມຶນເມົາ-ມົ້ວສຸມ.

ຄຳຖາມຂ້າງເທິງນີ້ ບໍ່ພຽງແຕ່ຜູ້ຂຽນສົງໄສດອກ! ບັນດາສັງຄົມເຂົາກໍຕັ້ງຄຳຖາມແບບດຽວກັນວ່າ ຝ່າຍປ້ອງກັນ-ກ່ຽວຂ້ອງ ເບິ່ງແຍງບໍ່ທົ່ວເຖິງບໍ?

ການມີຂັ້ນຕອນ ແລະ ລະບຽບເດັດຂາດ-ເຄັ່ງຄັດ-ປັບໃໝໃສ່ໂທດນັ້ນ ອາດແມ່ນວິທີແກ້ອັນໜຶ່ງ; ການຕິດຕາມກວດກາ ເຈົ້າຂອງຮ້ານບັນເທີງກໍແມ່ນອີກວິທີໜຶ່ງ ເພື່ອກັນໄວ້ດີກວ່າແກ້ພາຍຫລັງ! ຂ່າວຍິງສາວຖືກວາງຢາ.... ຫລາຍຄົນເຫັນກັບຕາ, ຮູ້ແກ່ໃຈຖ້າວ່າເຮັດຫູເບົາວາງເສີຍກໍຈະເຮັດໃຫ້ຄົນບໍ່ດີໄດ້ໃຈຍິ່ງຂຶ້ນ...!

<u>ສະເໜີການແລກປ່ຽນ</u>






































**ຜູ້ຊີ້ນຳ**

ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**

ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**

ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ

ບໍ່ໄດ້ຮັບໜັງສືພິມໂທ: +856 (21) 454563, ຕ້ອງການແຈ້ງຂ່າວໂທ: +856 (21) 413522
ອອກແບບ-ຈັດໜ້າໂດຍ: ນາງ ກຸກກິກ ບຸດດາໄຊ ແລະ ສົມນຶກ ແກ້ວໄຊຍະຈັກ